| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບຢັ້ງຢືນການເຄື່ອນໄຫວທຸລະກິດຂອງບໍລິສັດນໍາເຂົ້າ ແລະ ສົ່ງອອກນໍ້າມັນເຊື້ອໄຟ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoIC-DTD-20 | 09.01.2018 | ກົມການຄ້າພາຍໃນ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | D - ການສະໜອງໄຟຟ້າ, ອາຍແກັສ, ອາຍຮ້ອນ ແລະ ອາກາດປັບແຕ່ງ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ນໍ້າມັນເຊື້ອໄຟແມ່ນໜຶ່ງໃນປັດໃຈທີ່ສໍາຄັນ ສໍາລັບ ເສດຖະກິດພາຍໃນຂອງ ສປປ ລາວ ດັ່ງນັ້ນ, ຈຶ່ງມີຄວາມຈໍາເປັນຕ້ອງໄດ້ມີການຄຸ້ມຄອງ ແລະ ຕິດຕາມການດໍາເນີນທຸລະກິດທີ່ຕິດພັນກັບ ນໍ້າມັນເຊື້ອໄຟດັ່ງກ່າວ ແລະ ບໍລິສັດນໍາເຂົ້າ ແມ່ນເປັນດ່ານທໍາອິດຂອງທຸລະກິດນໍ້າມັນເຊື້ອໄຟ ຈຶ່ງມີຄວາມຈໍາເປັນຕ້ອງຄຸ້ມຄອງເປັນພິເສດ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫລື ນິຕິບຸກຄົນທີ່ມີຈຸດປະສົງ ດໍາເນີນທຸລະກິດບໍລິສັດ ເຄື່ອນໄຫວທຸລະກິດ ກ່ຽວກັບ ການນໍາເຂົ້າ ເພື່ອຂາຍຍົກໃຫ້ບໍລິສັດຈໍາໜ່າຍພາຍໃນ, ສົ່ງອອກ, ນໍາເຂົ້າ ເພື່ອສົ່ງອອກຕໍ່ ຫລື ຜ່ານແດນ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ບໍ່ມີ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | ບໍລິສັດນໍາເຂົ້າ ແລະ ສົ່ງອອກນໍ້າມັນເຊື້ອໄຟ ຕ້ອງສ້າງແຜນການນໍາເຂົ້າ ແລະ ຈໍາໜ່າຍນໍ້າມັນເຊື້ອໄຟປະຈໍາປີ ໂດຍຜ່ານການຢັ້ງຢືນຈາກສະມາຄົມນໍ້າມັນເຊື້ອໄຟ ສະເໜີຕໍ່ກະຊວງອຸດສາຫະກໍາ ແລະ ການຄ້າ ກ່ອນວັນທີ 31 ເດືອນຕຸລາຂອງ ແຕ່ລະປີ ເພື່ອພິຈາລະນາ ແລະ ໃນກໍລະນີຕ້ອງການນໍາເຂົ້າເກີນແຜນ, ຕ້ອງຜສ້າງແຜນໃໝ່ ກ່ອນວັນນໍາເຂົ້າ 60 ວັນ ເພື່ອພິຈາລະນາ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| **ໄລຍະເວລາໃນການພິຈາລະນາຄໍາຮ້ອງ ໃນການອອກໃບອະນຸຍາດ** | 35 | ພາຍຫລັງໄດ້ຮັບເອກະສານຄົບຖ້ວນ, ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງປະສານສົມທົບກັບຂະແໜງການກ່ຽວຂ້ອງ ລົງກວດກາ ພາຍໃນ 5 ວັນລັດຖະການ ແລະ ຫາກຜ່ານການກວດກາ ລວມທັງ ອກະສານຄົບຖ້ວນຖືກຕ້ອງ, ຕ້ອງອອກໃບຢັ້ງຢືນ ພາຍໃນ 30 ວັນລັດຖະການ |
| **ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ** | 1. ມີທຶນຈົດທະບຽນ 150 ຕື້ກີບຂຶ້ນໄປ ໂດຍຕ້ອງມີທຶນໝູນວຽນ 60 ຕື້ກີບຂຶ້ນໄປ; 2. ມີສະຖານທີ່ຕັ້ງຂອງສາງ ທີ່ສາມາດບັນຈຸໄດ້ 5 ລ້ານລິດຂຶ້ນໄປ; 3. ຕ້ອງມີເຄື່ອງໝາຍບໍລິສັດເປັນຂອງຕົນເອງ ຊຶ່ງໄດ້ຈົດທະບຽນເຄື່ອງໝາຍຖືກຕ້ອງ 4. ມີພາຫະນະຂົນສົ່ງນໍ້າມັນເຊື້ອໄຟ ຢ່າງໜ້ອຍ 20 ຄັນ; 5. ມີຕົວແທນຈໍາໜ່າຍນໍ້າມັນເຊື້ອໄຟ ທີ່ເປັນບໍລິສັດຈໍາໜ່າຍພາຍໃນ; 6. ມີຫ້ອງກວດສອບຄຸນະພາບນໍ້າມັນເຊື້ອໄຟທີ່ໄດ້ຂຶ້ນທະບຽນຖືກຕ້ອງ ຈາກ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ; 7. ມີພະນັກງານ ຢ່າງໜ້ອຍ 30 ຄົນທີ່ມີໃບຢັ້ງຢືນຜ່ານການຝຶກອົບຮົມ ກ່ຽວກັບ ທຸລະກິດນໍ້າມັນເຊື້ອໄຟ ອອກໂດຍອົງການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ | |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ?** | ປະຕິເສດ ກໍລະນີ ຜູ້ຮ້ອງຂໍບໍ່ມີຄຸນະສົມບັດ ຫລື ເງື່ອນໄຂຕາມທີ່ລະບຸໄວ້ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກໍານົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 36 |
| **ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ** | |

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລື ບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າແບບຟອມຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 0.00 | 0.00 | 0.00 |
| **ຄໍາເຫັນ** | ໃບອະນຸຍາດນີ້ ຫາກໍ່ມີຜົນບັງຄັບໃຊ້ ຈຶ່ງບໍ່ທັນໄດ້ມີການກໍານົດຄ່າທໍານຽມ ແລະ | | | |

| ຄ່າທຳນຽມ | |
|---|---|
| | ຄ່າບໍລິການໄວ້ໃນນິຕິກຳໃດ ແລະ ເຈົ້າໜ້າທີ່ຍັງບໍ່ທັນໄດ້ຕົກລົງເປັນເອກະພາບ ກ່ຽວກັບ ຄ່າທຳນຽມ ແລະ ຄ່າບໍລິການດັ່ງກ່າວ |

| ຄ່າທຳນຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທຳນຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທຳນຽມ** | **ຄ່າ ແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 0.00 | 0.00 | 0.00 |
| **ຄໍາເຫັນ** | ໃບອະນຸຍາດນີ້ ຫາກໍ່ມີຜົນບັງຄັບໃຊ້ ຈຶ່ງບໍ່ທັນໄດ້ມີການກຳນົດຄ່າທຳນຽມ ແລະ ຄ່າບໍລິການໄວ້ໃນນິຕິກຳໃດ ແລະ ເຈົ້າໜ້າທີ່ຍັງບໍ່ທັນໄດ້ຕົກລົງເປັນເອກະພາບ ກ່ຽວກັບ ຄ່າທຳນຽມ ແລະ ຄ່າບໍລິການດັ່ງກ່າວ | | | |

| ນິຕິກຳທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ນິຕິກຳ** | **ເລກທີ** | **ວັນທີ** | **ຄໍາເຫັນ** |
| ດຳລັດວ່າດ້ວຍ ທຸລະກິດນໍ້າມັນເຊື້ອໄຟ | 331/ນຍ | 27.10.2017 | ພາກທີ II ການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດນໍ້າມັນເຊື້ອໄຟ ໝວດທີ 1 ການສ້າງຕັ້ງທຸລະກິດນໍ້າມັນເຊື້ອໄຟ (ມາດຕາ 6 - 8) ໝວດທີ 2 ການເຄື່ອນໄຫວທຸລະກິດຂອງບໍລິສັດນໍາເຂົ້າ ແລະ ສົ່ງອອກນໍ້າມັນເຊື້ອໄຟ (ມາດຕາ 10 - 18) |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ໃບຢັ້ງຢືນການມອບເລກປະຈຳຕົວຜູ້ເສຍອາກອນ |
| ໃບຕາດິນ |

**ລາຍລະອຽດຂໍ້ມູນ ສໍາລັບ ໃບອະນຸຍາດ**
**ໂຄງການທົບທວນ ແລະ ປັບປຸງລະບຽບການທີ່ຕິດພັນກັບ ການສ້າງຕັ້ງທຸລະກິດ ໃນ ສປປ ລາວ**

| ເອກະສານປະກອບ |
|---|
| ໃບອະນຸຍາດປຸກສ້າງ |
| ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ |
| ໃບທະບຽນວິສາຫະກິດ ຂອງບໍລິສັດຈໍາກັດ |
| ໃບຢັ້ງຢືນຜ່ານການຝຶກອົບຮົມ ກ່ຽວກັບ ທຸລະກິດນໍ້າມັນເຊື້ອໄຟ ອອກໃຫ້ໂດຍອົງການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ |
| ໃບຢັ້ງຢືນເປັນສະມາຊິກຂອງສະມາຄົມນໍ້າມັນເຊື້ອໄຟ ຢູ່ ສປປ ລາວ |
| ໜັງສືຢັ້ງຢືນການເປັນຕົວແທນ ຫລື ສັນຍາຊື້-ຂາຍ ນໍ້າມັນເຊື້ອໄຟຈາກ ບໍລິສັດນໍ້າມັນເຊື້ອໄຟຕ່າງປະເທດ ຍີ່ຫໍ້ໃດໜຶ່ງ |
| ໃບຢັ້ງຢືນການກວດຜ່ານ ກ່ຽວກັບ ຄວາມປອດໄພທາງດ້ານອັກຄີໄພຂອງ ສາງນໍ້າມັນເຊື້ອໄຟ |
| ໃບຢັ້ງຢືນຖານະທາງດ້ານການເງິນແລະຊັບສິນ |
| ໃບຢັ້ງຢືນທີ່ຢູ່ |
| ບົດວິພາກເສດຖະກິດເຕັກນິກ |
| ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| **ປີ** | **ອອກໃໝ່** | **ຕໍ່ອາຍຸ** |
| 2016 | | |